ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 23 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 04 ມິຖຸນາ 2018

ສຳນັກງານ ຄຄຊ
ເລກທີ 592
ວັນທີ 06 JUN 2018
ໂທລະສັບ 021 217770

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ ປະຈຳອາທິດທີ 14-18/05/2018 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 1,29% ທຽບໃສ່ເອີໂຣ ເນື່ອງຈາກຕົວເລກດັດຊະນີຊີ້ນຳເສດຖະກິດຂອງສະຫະລັດອາເມລິກາ ໃນເດືອນ 04/2018 ເພີ່ມຂຶ້ນ ຢູ່ໃນລະດັບ 0,4% ຈາກເພີ່ມຂຶ້ນ 0,3% ໃນເດືອນຜ່ານມາ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການວ່າງງານຕໍ່ເນື່ອງຂອງອາທິດທີ 05/05/2018 ຫຼຸດລົງ ມີຈຳນວນ 1,71 ລ້ານຄົນ ຈາກ 1,79 ລ້ານຄົນ ໃນອາທິດຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 07-11/05/2018 | ອາທິດນີ້ 14-18/05/2018 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1934 | 1,1782 | 1,29% |
| ເຢນ/ໂດລາ | 109,30 | 110,93 | -1,47% |
| ບາດ/ໂດລາ | 31,85 | 32,160 | -0,96% |
| ເປໂຊ/ໂດລາ | 52,31 | 52,37 | -0,12% |
| ຣູເປັຍ/ໂດລາ | 13.945,00 | 14.150,00 | -1,45% |
| ໂດລາສິງກະໂປ/ໂດລາ | 1,3337 | 1,3437 | -0,74% |
| ຢວນ/ໂດລາ | 6,3327 | 6,3760 | -0,68% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນຫຼຸດລົງ 1,29% ຈາກ 71,44 ໂດລາ/ບາເຣວ ມາເປັນ 70,52 ໂດລາ/ບາເຣວ ເນື່ອງຈາກ ສະຫະລັດອາເມລິກາ ໄດ້ເພີ່ມແທ່ນຂຸດເຈາະນ້ຳມັນດິບຂຶ້ນຢ່າງຕໍ່ເນື່ອງ ຊຶ່ງມີຈຳນວນ 844 ແທ່ນ ໃນວັນທີ 18/05/2018, ເຮັດໃຫ້ປະລິມານການຜະລິດນ້ຳມັນດິບຂອງ ສະຫະລັດອາເມລິກາ ເພີ່ມຂຶ້ນມາຢູ່ໃນລະດັບ 10,7 ລ້ານບາເຣວຕໍ່ວັນ;

- ລາຄາຄຳຫຼຸດລົງ 2,85% ຈາກ 1.324,69 ໂດລາ/ອອນ ມາເປັນ 1.286,92 ໂດລາ/ອອນ ເນື່ອງຈາກການແຂງຄ່າຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອເກັງກຳໄລ.

2. ສະພາບການຊື້-ຂາຍອັດຕາແລກປ່ຽນ

2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,13% ແຕ່ແຂງຄ່າຂຶ້ນ 0,29% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 1,01% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 2,76% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 11/05/2018 | | | ອາທິດນີ້ 18/05/2018 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.372,62 | 8.403,99 | 8.386,37 | 8.380,35 | 8.408,09 | 8.397,08 | -0,09% | -0,05% | -0,13% | -0,94% | -0,96% | -1,01% |
| ບາດ | 263,08 | 264,58 | 264,18 | 262,68 | 263,77 | 263,41 | 0,15% | 0,31% | 0,29% | -2,91% | -2,66% | -2,76% |

2.2 ສະພາບຖານເງິນຕາແລະປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,37% ເມື່ອທຽບໃສ່ອາທິດຜ່ານມາ. ສາເຫດຕົ້ນຕໍແມ່ນມາຈາກ ທທກ ຮັບໂອນເງິນຈາກຕ່າງປະເທດສຸດທິ 25 ລ້ານໂດລາສະຫະລັດ ໃນນັ້ນ, BCEL ຮັບໂອນເງິນໃຫ້ລູກຄ້າຂະແໜງກໍ່ສ້າງ ປະມານ 40 ລ້ານໂດລາສະຫະລັດ ແລະ ລັດຖະບານ ໂອນໃຫ້ ປກຊ, ປກສ ຈຳນວນ 165,20 ຕື້ກີບ. ໃນຂະນະດຽວກັນ, ລັດຖະບານຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ຢືມໃຫ້ຕ່າງປະເທດ ຈຳນວນ 12,02 ລ້ານໂດລາສະຫະລັດ ແລະ ຊຳລະເງິນກູ້ໃຫ້ ທຫລ 100 ຕື້ກີບ (ບ້ວງລ່ວງໜ້າ 2.000 ຕື້ກີບ); ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,08%;

- ປະລິມານເງິນ M2 ເພີ່ມຂຶ້ນ 0,25% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,73%.

2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (11-17/05/2018) ເຫັນວ່າ ທທກ ຊື້ໂດລາສຸດທິ 3,36 ລ້ານໂດລາ (ໃນນີ້ຊື້ໂດລາໄດ້ 34,09 ລ້ານໂດລາ ແລະ ຂາຍໂດລາໄດ້ 30,73 ລ້ານໂດລາ) ແຕ່ຂາຍເງິນບາດສຸດທິ 480,01 ລ້ານບາດ (ໃນນີ້ຊື້ບາດໄດ້ 170,08 ລ້ານບາດ ແລະ ຂາຍບາດໄດ້ 650,09 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາ ເຫັນວ່າເງິນໂດລາຫຼຸດລົງ 2,42% ແຕ່ເງິນບາດ ເພີ່ມຂຶ້ນ 3,18%;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາໃຫ້ທະນາຄານທຸລະກິດ ຈຳນວນ 8,07 ລ້ານໂດລາ ແລະ ເງິນບາດ ຈຳນວນ 130,50 ລ້ານບາດ;

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 3,19 ລ້ານໂດລາ ແລະ ເງິນບາດ ຈຳນວນ 78,90 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆເຫັນວ່າ: ທຫລ ຂາຍເງິນບາດ ຈຳນວນ 38,04 ລ້ານບາດ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 04-10/05/2018 | | ອາທິດນີ້ 11-17/05/2018 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **29,46** | **160,29** | **34,09** | **170,08** | **15,72%** | **6,11%** |
| - ທ/ຄທຸລະກິດລັດ | 10,24 | 47,31 | 12,20 | 55,79 | 19,14% | 17,92% |
| - ທ/ຄທຸລະກິດອື່ນໆ | 19,22 | 112,98 | 21,89 | 114,29 | 13,89% | 1,16% |
| **2. ການຂາຍເງິນຕາຕ່າງປະເທດ** | **36,97** | **686,84** | **30,73** | **650,09** | **-16,88%** | **-5,35%** |
| - ທ/ຄທຸລະກິດລັດ | 20,92 | 142,49 | 16,24 | 224,63 | -22,37% | 57,65% |
| - ທ/ຄທຸລະກິດອື່ນໆ | 16,05 | 544,35 | 14,49 | 425,46 | -9,72% | -21,84% |
| ຊື້-ຂາຍສຸດທິ ທທກ | **-7,51** | **-526,55** | **3,36** | **-480,01** | **-144,74%** | **-8,84%** |
| - ຜິດດ່ຽງຊື້-ຂາຍ | -25,49% | -328,50% | 9,86% | -282,23% | -138,67% | -14,09% |
| - ມູນຄ່າການຊື້-ຂາຍ | **66,43** | **847,13** | **64,82** | **820,17** | **-2,42%** | **-3,18%** |
| **3. ການຊື້-ຂາຍ ລະຫວ່າງ ທຫລ ກັບ ທທກ** | **-22,70** | **-84,80** | **-8,07** | **-130,50** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 22,70 | 84,80 | 8,07 | 130,50 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **3,27** | **184,53** | **3,19** | **78,90** | | |
| **5. ທຫລ ກັບ ພາກສ່ວນອື່ນໆ** | **0,00** | **0,00** | **0,00** | **-38,04** | | |
| -ທຫລ ຊື້ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,00 | 0,00 | 0,00 | 38,04 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ໃນເດືອນ 05/2018 ຄາດວ່າຈະຢູ່ໃນລະດັບ 2,22% (ຕົວເລກຄາດຄະເນ).

### 2,5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດເຂົ້າມາ ສປປ ລາວ ໃນອາທິດນີ້ ເພີ່ມຂຶ້ນ 4,6% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 72,26 ລ້ານໂດລາສະຫະລັດທຽບເທົ່າ. ພ້ອມນີ້ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຫຼຸດລົງ 25,5% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 57,49 ລ້ານໂດລາສະຫະລັດທຽບເທົ່າ.

### 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 925 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 258 ສະບັບ ເທົ່າກັບ 38,68% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 268,88 ຕື້ກີບ ທຽບໃສ່ອາທິດຜ່ານມາ ຫຼຸດລົງ 15,33 ຕື້ກີບ ເທົ່າກັບ 5,39%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (11-17/05/2018) ມີທັງໝົດ 3,956 ຄັ້ງ ເຊິ່ງປະກອບມີດັ່ງນີ້:

- **ສະກຸນເງິນກີບ**: ມີການເຄື່ອນໄຫວຈໍານວນ 3,805 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເພີ່ມຂຶ້ນ ຈໍານວນ 83 ຕື້ກີບ ຈາກ 1.198,16 ຕື້ກີບ ມາເປັນ 1.280,68 ຕື້ກີບ ເທົ່າກັບ 6,88%;
- **ກະຊວງການເງິນ**: ມີການເຄື່ອນໄຫວຈໍານວນ 151 ຄັ້ງ, ມູນຄ່າການໂອນໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ ຈໍານວນ 54,44 ຕື້ກີບ ຈາກ 227,62 ຕື້ກີບ ມາເປັນ 173,18 ຕື້ກີບ ເທົ່າກັບ 23,91%.

4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ປິດຢູ່ທີ່ 940,18 ຈຸດ ຫຼຸດລົງ ຈາກ 940,78 ຈຸດ ຫຼື ເທົ່າກັບ 1,46% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີມູນຄ່າການຊື້-ຂາຍ 2,06 ຕື້ກີບ ຫຼຸດລົງ 49,31% ທຽບໃສ່ອາທິດຜ່ານມາ, ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 57,90% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດການຫຼຸດລົງຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວຫຼຸດລົງຂອງລາຄາຮຸ້ນ PCD ແລະ LCC.

5. ວຽກງານອື່ນໆທີ່ພົ້ນເດັ່ນ.

- **ສໍາເລັດການເຂົ້າຮ່ວມກອງປະຊຸມ, ຈັດກອງປະຊຸມ ແລະ ພິທີຕ່າງໆ**: ❶ ກອງປະຊຸມນາຍົກ-ຮອງນາຍົກ ປະຈໍາເດືອນພຶດສະພາ 2018 ທີ່ (ຫສນຍ), ❷ ກອງປະຊຸມຮ່ວມກັບກະຊວງແຜນການ ແລະ ການລົງທຶນ ແລະ ຄະນະຊ່ຽວຊານກ່ຽວກັບການສ້າງລະບຽບການໃນການຄຸ້ມຄອງ ແລະ ກໍານົດອັດຕາອາກອນສໍາລັບກິດຈະການຄາຊີໂນທົ່ວປະເທດ ທີ່ (ທຫລ), ❸ ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍຄ່າທໍານຽມ, ຄ່າບໍລິການ ແລະ ຄ່າຄຸ້ມຄອງປະຈໍາປີຂອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ, ❹ ກອງປະຊຸມສະຫຼຸບວຽກງານທຸລະກິດເຊົ່າສິນເຊື່ອ ປະຈໍາປີ 2017 ທີ່ (ສູນ ICTC), ❺ ກອງປະຊຸມສະຫຼຸບວຽກງານໂຮງຊວດຈໍາ ປະຈໍາປີ 2017 ທີ່ (ສູນ ICTC) ແລະ ❻ ພິທີປະກາດການຈັດຕັ້ງສະພາບໍລິຫານ ທະນາຄານສົ່ງເສີມກະສິກໍາ ທີ່ (ທສກ);
- ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ເຂດທ້ອງຖິ່ນພາກກາງ;
- ສໍາເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະປະເມີນເສດຖະກິດມະຫາພາກ ສປປ ລາວ ຂອງກອງທຶນການເງິນສາກົນ ແລະ ເຂົ້າຮ່ວມຕິດຕາມ ທ່ານຮອງນາຍົກ ເພື່ອຮັບການເຂົ້າຢ້ຽມຂໍ່ານັບຂອງຄະນະດັ່ງກ່າວ;
- ສໍາເລັດຕ້ອນຮັບການເຂົ້າຢ້ຽມຂໍ່ານັບ ຄະນະຜູ້ວ່າການ ທຫລ ຈາກຄະນະຕະຫຼາດຫຼັກຊັບເກົາຫຼີ.

## III. ແຜນວຽກຈຸດສຸມອາທິດຕໍ່ໄປ:

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- ສືບຕໍ່ຕິດຕາມ, ກວດກາ ແລະ ສັງລວມການຮັກສາລະດັບຖານະເງິນຕາຕ່າງປະເທດຂອງທະນາຄານທຸລະກິດທົ່ວລະບົບ;
- **ກະກຽມຈັດກອງປະຊຸມ, ເຂົ້າຮ່ວມກອງປະຊຸມ ແລະ ພິທີຕ່າງໆ**: ❶ ກອງປະຊຸມລັດຖະບານສະໄໝສາມັນປະຈໍາເດືອນ ພຶດສະພາ 2018 ທີ່ (ຫສນຍ), ❷ ກອງປະຊຸມຄົ້ນຄວ້າປັບປຸງຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ ທີ່ (ທຫລ), ❸ ກອງປະຊຸມຄະນະກໍາມາທິການເພື່ອຄວາມກ້າວໜ້າຂອງແມ່ຍິງ ແລະ ແມ່-ເດັກຢູ່ຂົງເຂດທະນາຄານ ທີ່

(ທຫລ), ❹ ກອງປະຊຸມນຳສະເໜີແຜນຈັດຕັ້ງປະຕິບັດຍຸດທະສາດການເຂົ້າເຖິງບໍລິການທາງດ້ານການເງິນຂອງ ສປປ ລາວ ທີ່ (ຕລຊລ) ແລະ ❺ ກອງປະຊຸມສຳມະນາ ເຄືອຊ່າຍນະວັດຕະກຳການເງິນອາຊຽນ ແລະ ການເຂົ້າເຖິງການບໍລິການດ້ານການເງິນຢ່າງທົ່ວເຖິງ ໂດຍຜ່ານນະວັດຕະກຳທາງດ້ານການເງິນ ທີ່ (ໂຮງແຮມຄຣາວພລາຊາ);

- ທ່ານຜູ້ວ່າການ ທຫລ ພ້ອມດ້ວຍຄະນະກະກຽມເດີນທາງໄປເຄື່ອນໄຫວວຽກງານທາງລັດຖະການຢູ່ເຂດທ້ອງຖິ່ນພາກເໜືອ;

ຫົວໜ້າຫ້ອງການ

ທ້ອງການແຫ່ງ ສປປ ລາວ

ເພັດສະຖາພອນ ແກ້ວວົງວິຈິດ